# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 13 ພຶສພາ 2007 (5-6-2007)

---

## <u>ຍອມຮັບເອົາຄວາມຮັບຜິດຊອບ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ມັດທາຍ 7:1-5; ຢາໂກໂບ 4:1-3, 6-12

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ໃນຂນະທີ່ມີການບໍ່ຖືກຕ້ອງປອງດອງກັນ, ບັນດາຜູ້ທີ່ເຊື່ອຕ້ອງຍອມຮັບເອົາຄວາມຮັບຜິດຊອບຂອງການກະທຳ ແລະນິສັຍຂອງຕົນທີ່ມີສ່ວນໃນການບໍ່ຖືກຕ້ອງປອງດອງກັນນັ້ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງແລະແກ້ໄຂບັນຫາຂໍ້ຂັດແຍ່ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການດັດແປງແກ້ໄຂແລະການຍອມຮັບເອົາຄວາມຮັບຜິດຊອບໃນແສງສະວ່າງແຫ່ງພຣະທັມຂອງພຣະເຈົ້າສຳລັບສ່ວນຂອງທ່ານໃນການແຕກແຍກນັ້ນ; ແລະ
- ຈິງໃຈສາຣະພາບຄວາມຜິດຂອງທ່ານທີ່ອອກມາຈາກການກະທຳແລະນິສັຍທີ່ຜິດບາບຂອງທ່ານ.

## <u>ຂ້າພະເຈົ້າຈະຍອມຮັບເອົາຄວາມຮັບຜິດຊອບອັນຊຶ່ງເປັນສ່ວນຂອງການແຕກແຍກນັ້ນໄດ້ຢ່າງໃດ?</u>

"ມັນບໍ່ແມ່ນຄວາມຜິດຂອງຂ້ອຍ" ທ່ານມັກຈະໄດ້ຍິນຢູ່ຕລອດຈາກທຸກໆຂັ້ນຕອນຂອງຊີວິດ-ເດັກນ້ອຍຖຽງກັນເມື່ອຢູ່ໃນຣົດ, ຄູ່ຜົວເມັຽມີບັນຫາໃນການສົມຣົດ, ເພື່ອນບ້ານທີ່ນຳກັນຂຶ້ນສານ, ນັກການເມືອງກຸ່ມນຶ່ງກໍໂຈມຕີຕໍ່ກຸ່ມອື່ນ, ແລະປະເທດກໍຕຽມເຂົ້າສູ່ສົງຄາມ. ທົ່ວທັງໂລກກຳລັງມີການ "ນິນທາຄົນອື່ນ." ແຕ່ວ່າ, ກໍໜ້າເສັຽໃຈນຳພວກເຂົາທີ່ບໍ່ພົບກັບຄວາມສງົບເລີຍ.

ພຣະເຈົ້າບອກໃຫ້ໄພ່ພົນຂອງພຣະອົງໃຫ້ແຕກຕ່າງຈາກຊາວໂລກ. ພຣະອົງບອກພວກເຮົາໃຫ້ຮັບເອົາຄວາມຮັບຜິດຊອບຂອງແຕ່ລະຄົນໃນການແຕກແຍກກັນນັ້ນ. ແລະພຣະອົງຍັງເຊື້ອເຊີນຜູ້ທີ່ຍອມຮັບເອົາຄວາມຮັບຜິດຊອບຂອງຕົນເຂົ້າຮ່ວມກັບວຽກງານການສ້າງຄວາມສງົບສຸກອັນແທ້ຈິງຂອງພຣະອົງ.

## <u>ສຶກສາພຣະຄັມພີ</u>

### 1. <u>ປັບປຸງແກ້ໄຂຕົນເອງ</u> (ມັດທາຍ 7:1-5)

ໃນຕອນນຶ່ງຂອງລາຍການໂທຣະທັດຊຶ່ງຂ້າພະເຈົ້າມັກຫລາຍ. ມີຕຳຣວດຄົນນຶ່ງເຂົ້າຮ່ວມກັບກຸ່ມນັກຮ້ອງໝູ່ຂອງເມືອງນັ້ນ. ເຖິງແມ່ນວ່າລາວຈະຮ້ອງບໍ່ຖືກສຽງກໍຕາມ. ຂນະທີ່ມີການຝຶກຊ້ອມຄັ້ງທຳອິດກັບກຸ່ມນັກຮ້ອງໝູ່ນັ້ນ, ຫົວໜ້າຄຸມຕ້ອງໄດ້ຢຸດພວກເຂົາຫລາຍເທື່ອເພາະມີຜູ້ໃດຜູ້ນຶ່ງຮ້ອງຜິດສຽງ. ຕຳຣວດຄົນນັ້ນກໍຈອບຊອກຟັງເບິ່ງສຽງຂອງຜູ້ທີ່ຮ້ອງຜິດນັ້ນ. ລາວບໍ່ຄຳນຶງເຖິງເລີຍວ່າສຽງທີ່ເປັນບັນຫານັ້ນແມ່ນສຽງຂອງລາວເອງ.

ເມື່ອພວກເຮົາໄດ້ຍິນສຽງທີ່ບໍ່ດີອອກມາຈາກສາຍສຳພັນຂອງເຮົາກັບຜູ້ອື່ນໆ. ພວກເຮົາຂ້ອນຂ້າງຈະນິນທາໃສ່ຄົນອື່ນສຳລັບຄວາມຜິດນັ້ນ. ເມື່ອພວກເຮົາຫາກຢູ່ກັບນິສັຍແບບນີ້, ພວກເຮົາລືມຄິດໄປວ່າເຮົາກໍເປັນຕົ້ນເຫດຂອງບັນຫາ.

ພຣະເຢຊູໄດ້ຮູ້ກ່ອນແລ້ວວ່າພວກເຮົາຈະນິນທາໃສ່ຜູ້ອື່ນແລະຊອກຫາທາງແກ້ຕົວຂອງພວກເຮົາ. ໃນຄຳເທສ

ມາທີ່ຈ້າຍພູ, ພຣະອົງສອນພວກເຮົາວ່າການຕັດສິນຜູ້ອື່ນບໍ່ໄດ້ເຮັດໃຫ້ພວກເຮົາອອກຈາກຄວາມຮັບຜິດຊອບຊຶ່ງເປັນສ່ວນຂອງພວກເຮົາໃນການແຕກແຍກນັ້ນ. ພຣະອົງໃຊ້ຄໍາອຸປມາທີ່ຂ້ອນຂ້າງຕລົກແຕ່ເລິກເຊິ່ງຫລາຍໃນການສອນຫລັກຄວາມຈິງນີ້ກັບພວກເຮົາ. ພຣະເຢຊູເວົ້າວ່າການນິນທາໃສ່ຄົນອື່ນໂດຍປາສຈາກການພິຈາຣະນາກ່ອນ ກໍຄືກັນກັບ**ການທີ່ເຫັນສ້ຽນນ້ອຍໆໃນຕາຂອງຜູ້ອື່ນ**ໂດຍບໍ່ຮູ້ເລີຍວ່າ**ມີໄມ້ທັງທ່ອນໃນຕາຂອງຕົນເອງ**. ພຣະເຢຊູບອກພວກຄຣິສຕຽນໃຫ້ຊອກຫາຄວາມສງົບສຸກ ໂດຍການເບິ່ງພາຍໃນພວກເຮົາເອງກ່ອນແລະສັດຊື່ຍອມຮັບພາກສ່ວນຄວາມຮັບຜິດຊອບຂອງພວກເຮົາຕໍ່ບັນຫາຕ່າງໆທີ່ແບ່ງແຍກພວກເຮົາ.

ພວກເຮົາບໍ່ສາມາດເຂົ້າໃຈຂໍ້ຄໍາສັ່ງຂອງພຣະເຢຊູຈົນກວ່າພວກເຮົາຈະເຂົ້າໃຈວ່າເປັນດ້ວຍເຫດໃດພວກເຮົາຈຶ່ງຕ້ອງພິຈາຣະນາຕົວພວກເຮົາກ່ອນ. ພຣະເຢຊູກໍບໍ່ໄດ້ບອກວ່າໃຫ້ພວກເຮົາເຊົານິນທາຄົນອື່ນໆແຕ່ໃຫ້ນິນທາຕົວເຮົາເອງດອກ. ການກ່າວນິນທາບໍ່ໄດ້ຊ່ອຍຜູ້ນຶ່ງຜູ້ໃດ. ພຣະເຢຊູບອກໃຫ້ພວກເຮົາພິຈາຣະນາຕົວເອງເສັຽກ່ອນເພາະວ່າຫລັງຈາກນັ້ນພວກເຮົາກໍ**ຈະເຫັນຕົວເຮົາເອງຢ່າງແຈ່ມແຈ້ງ**. ການຈັດການກັບຕົວເຮົາເອງກ່ອນນັ້ນແມ່ນການຈັດຕຽມທ່ານໃຫ້ເຫັນແລະເຮັດໃນສິ່ງທີ່ຖືກຕ້ອງແລະເປັນສິ່ງທີ່ໜ້າຮັກສໍາລັບຄົນອື່ນໆ. ໂດຍເຫັນນິມິດທີ່ແຈ່ມແຈ້ງນີ້, ທ່ານຈຶ່ງຈະສາມາດຊ່ອຍເອົາສ້ຽນອອກຈາກຕາຂອງພີ່ນ້ອງໄດ້. ໂດຍການຍອມສາລະພາບຢ່າງຖ່ອມໃຈແລະຕາທີ່ສະອາດ (ບໍ່ມີທ່ອນໄມ້ຢູ່ໃນຕາຂອງຕົນ), ທ່ານສາມາດເຫັນທາງທີ່ນໍາໄປສູ່ຄວາມສງົບສຸກໄດ້.

**໒. <u>ສັງເກດຮູ້ແຫລ່ງທີ່ມາຂອງຄວາມແຕກແຍກ</u>** (ຢາໂກໂບ 4:1-3)

ຂ້າພະເຈົ້າໄດ້ຢູ່ໃນຫ້ອງຄົ້ນຄວ້າຊີວະວິທຍາຂອງວິທຍາລັຍແຫ່ງນຶ່ງ, ມີການສ່ອງກ້ອງຂຍາຍເບິ່ງແຊວລ໌ນ້ອຍໆຂອງສັດປະເພດນຶ່ງ, ຂນະສ່ອງກ້ອງຢູ່ນັ້ນຂ້າພະເຈົ້າສັງເກດເຫັນຈຸດດໍາໃຫຍ່ຈຸດນຶ່ງທີ່ຢູ່ແຈຂວາຂອງພາບນັ້ນ. ຂ້າພະເຈົ້າກໍຮູ້ໂລດວ່າຈຸດດໍານັ້ນບໍ່ໄດ້ແມ່ນສິ່ງທີ່ຂ້າພະເຈົ້າກໍາລັງສຶກສາຢູ່, ດັ່ງນັ້ນຂ້າພະເຈົ້າພະຍາຍາມກໍາຈັດມັນອອກ. ຂ້າພະເຈົ້າໄດ້ປ່ຽນສາກພາບນັ້ນ. ພ້ອມຍັງໄດ້ປ່ຽນກ້ອງສ່ອງອັນໃໝ່ອີກດ້ວຍ, ແຕ່ວ່າຈຸດດໍານັ້ນກໍຍັງປາກົດໃຫ້ເຫັນຄືເກົ່າ. ສຸດທ້າຍ, ຂ້າພະເຈົ້າຄິດອອກໄດ້ວ່າມີສິ່ງນຶ່ງເທົ່ານັ້ນທີ່ຂ້າພະເຈົ້າບໍ່ໄດ້ປ່ຽນຄືຕົວຂ້າພະເຈົ້າເອງ. ຈຸດດໍາທີ່ໄດ້ເຫັນນັ້ນແມ່ນເງົາທີ່ເກີດຈາກຜົນຂອງການຜ່າຕັດອັນເກົ່າໃນຕາກ້ໍາຂວາຂອງຂ້າພະເຈົ້າເອງ. ຄວາມມືດທີ່ຂ້າພະເຈົ້າຄິດວ່າມັນຢູ່ຂ້າງນອກນັ້ນມັນແມ່ນຄວາມມືດຈາກຮອຍຜ່າຕັດຢູ່ພາຍໃນຂ້າພະເຈົ້າເອງ.

ພວກເຮົາມີປະສົບການກັບຄວາມມືດໃນສາຍສໍາພັນຂອງພວກເຮົາເພາະວ່າພວກເຮົາຍຶດຖືເອົາຄວາມມືດໄວ້ພາຍໃນຕົວເຮົາ. ທ່ານຢາໂກໂບທ້າທາຍກັບພວກເຮົາໃຫ້ຮຽນຮູ້ຄວາມຈິງອັນນີ້ທີ່ພວກເຮົາຈະຮຽນເຖິງແຫລ່ງທີ່ມາອັນແທ້ຈິງຂອງຄວາມແຕກແຍກຕ່າງໆທີ່ທໍາລາຍສາຍສໍາພັນຂອງພວກເຮົາ. ລາວໄດ້ຖາມວ່າດັ່ງນີ້: ອັນໃດເປັນສາເຫດການຜິດຖຽງກັນ ແລະອັນໃດເປັນສາເຫດຂອງການທະເລາະວິວາດກັນໃນພວກເຈົ້າ? ລາວໃຊ້ຄໍາເວົ້າທີ່ຮຸນແຮງໃນການບັນລະຍາຍຄວາມພິນາດຈິບຫາຍທີ່ເຮັດໃຫ້ຄົນຂອງພຣະເຈົ້າແຕກແຍກກັນ. ຫລັງຈາກນັ້ນລາວກໍຕອບຄໍາຖາມຂອງລາວເອງ. ບໍ່ແມ່ນກິເລດຕັນຫາຂອງພວກເຈົ້າຫລືທີ່ເຮັດໃຫ້ພວກເຈົ້າຕໍ່ສູ້ກັນ. ພວກເຮົາສູ້ຮົບກັນຖ້າມກາງພວກເຮົາເພາະວ່າພວກເຮົາສູ້ຮົບກັນພາຍໃນພວກເຮົາເອງ. ກິເລດຕັນຫາຕ່າງໆທີ່ນໍາໄປສູ່ການແຕກແຍກກັນບໍ່ໄດ້ເຮັດໃຫ້ເກີດຄວາມເພິ່ງພໍໃຈຕາມຄວາມປາຖນາ. ພຣະຄໍາຕອນນີ້ບໍ່ໄດ້ຫ້າມພວກເຮົາຕໍ່ການຊົມຊອບຂອງຊີວິດອັນທີ່ເປັນການຖວາຍກຽດຕໍ່ພຣະເຈົ້າດອກ, ແຕ່ແທນທີ່ຈະເປັນຢ່າງນັ້ນມັນກັບໄດ້ເພີ້ມຄວາມປາຖນາໃຫ້ຄົບເຕັມຕໍ່ຄວາມຢາກອັນນັ້ນ. ດັ່ງເຊັ່ນຄວາມປາຖນາຢາກໄດ້ສິ່ງໃດສິ່ງນຶ່ງເຖິງແມ່ນວ່າມັນຈະທໍາລາຍສາຍສໍາພັນຕໍ່ພຣະເຈົ້າກໍຕາມຊ່າງແມ້ວ່າຊີວິດການອະທິຖານຂອງພວກເຮົາກາຍເປັນແບບເຫັນແກ່ຕົວແລະບໍ່ດີ, ກໍຍັງອ້ອນວອນທູນຂໍ**ເພື່ອຢາກຈະໄດ້ມາໃຊ້ຕາມຄວາມປາຖນາທີ່ທ່ານມີນັ້ນ**.

ພວກເຮົາຈະຊະນະຕໍ່ການສູ້ຮົບພາຍໃນພວກເຮົາໄດ້ຢ່າງໃດ ເພື່ອວ່າພວກເຮົາຈະຢູ່ຮ່ວມກັນໂດຍສັນຕິສຸກ? ປະການທໍາອິດ, ພວກເຮົາຕ້ອງສັດຊື່ຕໍ່ຊຶ່ງກັນແລະກັນກ່ຽວກັບນິສັຍແລະຄວາມປາຖນາທີ່ຜິດບາບຂອງພວກເຮົາ. ເມື່ອຂ້າພະເຈົ້າໄດ້ເຫັນຈຸດດໍາໃຫ້ຫ້ອງຄົ້ນຄວ້າຊຶ່ງມັນຢູ່ໃນຕາຂອງຂ້າພະເຈົ້າເອງ, ຂ້າພະເຈົ້າຢຸດໃນການຕິຕຽນກ້ອງຂຍາຍແລະແຜ່ນສາກພາບນັ້ນ. ໃນກໍຣະນີດຽວກັນນີ້, ເມື່ອພວກເຮົາຫາກປະສົບຕໍ່ຄວາມມືດຂອງການແຕກແຍກກັນ,

ພວກເຮົາຈະບໍ່ພົບສັນຕິສຸກໂດຍການຕິຕຽນນິນທາໃສ່ຜູ້ອື່ນ. ພວກເຮົາຕ້ອງເລີ່ມໂດຍຕັ້ງຄຳຖາມທີ່ຖ່ອມຕົວດັ່ງນີ້: ມັນແມ່ນຫຍັງຢູ່ໃນຕົວເຮົານີ້?

ປະການທີສອງ, ພວກເຮົາຕ້ອງສາລະພາບນິສັຍແລະການກະທຳຕ່າງໆທີ່ຜິດບາບຕໍ່ຊຶ່ງກັນແລະກັນນັ້ນ. ການສາລະພາບຄວາມຜິດພາດຕໍ່ຜູ້ອື່ນ ແມ່ນຂັ້ນຕອນທີ່ສຳຄັນອັນນຶ່ງຂອງການຄວບຄຸມຄວາມຮູ້ສຶກຕ່າງໆຂອງພວກເຮົາແທນທີ່ຈະໃຫ້ກິເລດຕັນຫາຄວບຄຸມພວກເຮົາ. ພ້ອມດຽວກັນນັ້ນ, ເມື່ອພວກເຮົາຫາກບອກຄົນອື່ນກ່ຽວກັບສນາມຣົບທີ່ເຮົາກຳລັງຕໍ່ສູ້ຢູ່ພາຍໃນເຮົານັ້ນ, ພວກເຮົາຍິນດີຕ້ອນຮັບຄຳອະທິຖານອ້ອນວອນຂອງຄົນອື່ນສຳລັບການກະທຳຂອງພວກເຮົາ. ການຍອມສາລະພາບຢ່າງສັດຊື່ແລະຖ່ອມໃຈເປັນພາກສ່ວນນຶ່ງອີກທີ່ເຮົາຕ້ອງເຮັດໃນເມື່ອມີການບໍ່ຖືກຕ້ອງປອງດອງກັນ ຊຶ່ງຈະຫນູນນ້ຳໃຈຄົນອື່ນໃຫ້ເບິ່ງເຫັນຄວາມບົກພ່ອງໃນຕົວຂອງເຂົາເອງແລະຊອກຫາຄວາມຊ່ວຍເຫລືອທີ່ເຂົາຕ້ອງການ.

**<u>3. ຍອມຢູ່ພາຍໃຕ້ພຣະເຈົ້າ</u>** (ຢາໂກໂບ 4:6-12)

ການເບິ່ງເຫັນແລະການຍອມສາລະພາບຮັບສ່ວນຮັບຜິດຊອບຂອງພວກເຮົາເອງໃນເມື່ອມີການຜິດຂ້ອງຕ້ອງຖຽງກັນນັ້ນມັນກົງກັນຂ້າມກັບທັມມະຊາດຜິດບາບຂອງມະນຸດ. ພວກເຮົາຈະຊອກຫາກຳລັງມາຈາກໃສເພື່ອຈະປ່ຽນນິສັຍແລະການຊອກຫາຄວາມປອງດອງຢ່າງຈິງໃຈນີ້? ທ່ານຢາໂກໂບມີຄຳຕອບ ເພິ່ນໄດ້ບັນທຶກເອົາໄວ້ວ່າ. **ພຣະອົງປະທານພຣະຄຸນອັນໃຫຍ່ຫລວງ**. ພຣະເຈົ້າປະທານພຣະຄຸນໃຫ້ແກ່ບັນດາຜູ້ທີ່ສແວງຫາຄວາມສງົບສຸກເພື່ອໃຫ້ມີຊັຍຊະນະຕໍ່ການທີ່ຈະນິນທາຕິຕຽນຜູ້ອື່ນຂອງພວກເຂົານັ້ນ. ແຕ່ວ່າກໍບໍ່ແມ່ນທຸກຄົນທີ່ຕຽມພ້ອມຮັບເອົາພຣະຄຸນທີ່ພຣະເຈົ້າປະສົງທີ່ຈະປະທານໃຫ້ແກ່ພວກເຮົານັ້ນ. **ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ**, ເພາະວ່າພຣະອົງບໍ່ສາມາດມອບພຣະຄຸນເພີ້ມໃຫ້ພວກທີ່ຄິດວ່າຕົນເອງມີທຸກຢ່າງແລ້ວ. **ພຣະເຈົ້າ...ປະທານພຣະຄຸນໃຫ້ຜູ້ທີ່ຖ່ອມໃຈ** ເພາະວ່າພວກເຂົາຮູ້ດີວ່າເຂົາຕ້ອງການພຣະອົງຫລາຍຊ່ຳໃດແລະຢາກໄດ້ຂອງປະທານຈາກພຣະອົງ.

ພຣະຄຸນຂອງພຣະເຈົ້າຊ່ວຍໃຫ້ພວກເຮົາເຂັ້ມແຂງຂຶ້ນຝ່າຍຈິດວິນຍານ ໃນການຊອກຫາສັນຕິສຸກຢ່າງແທ້ຈິງ. ໃນຂໍ້ທີ 7-10, ທ່ານຢາໂກໂບສັ່ງໄວ້ວ່າໃຫ້ພວກເຮົາປູກຝັງການກະທຳແລະນິສັຍໃນການສ້າງສັນຕິສຸກທີ່ແທ້ຈິງ. ພວກເຮົາຕ້ອງ**ຍອມຢູ່ພາຍໃຕ້ຂອງພຣະເຈົ້າ**, ຍອມປະຖິ້ມຄວາມຄິດທີ່ເຫັນແກ່ຕົວຂອງພວກເຮົາມຸ້ງຫນ້າຫາສິ່ງທີ່ດີກວ່າຄືຣາຊອານາຈັກຂອງພຣະເຈົ້າ. ພຣະຄຸນຂອງພຣະອົງເຮັດໃຫ້ພວກເຮົາເຂັ້ມແຂງສາມາດຕໍ່ສູ້ກັບທາງແຫ່ງການທຳລາຍຂອງຜີມານ, ແລະການແບ່ງແຍກຂອງມັນ. ການຕໍ່ສູ້ກັບຜີມານແມ່ນການຂັບໄລ່ມັນແລະຄວາມແຕກແຍກຊຶ່ງມັນເປັນຜູ້ກໍ່ຂຶ້ນໃຫ້ອອກຈາກພວກເຮົາໄປແລະປະເຮົາໃຫ້ມີເສລີພາບໃນການສ້າງຄວາມສງົບສຸກ. ເມື່ອພວກເຮົາຫາກຊອກຫາຄວາມສງົບສຸກຢ່າງຖ່ອມຕົວ, ພວກເຮົາກໍຢູ່ພາຍໃຕ້ພຣະຄຸນຂອງພຣະເຈົ້າ. ເມື່ອໃດພວກເຮົາຫາກຫຍັບເຂົ້າໃກ້ພຣະອົງ, ພຣະອົງກໍສັນຍາວ່າ**ຈະຫຍັບມາສະຖິດຢູ່ໃກ້ທ່ານ**.

ຕອນທີ່ເປັນສິດຍາພິບານ, ຂ້າພະເຈົ້າໄດ້ໄປຢ້ຽມຢາມພວກເດັກນ້ອຍເກີດໃຫມ່ແລະຄອບຄົວຂອງພວກເຂົາ. ຂ້າພະເຈົ້າໄດ້ຮຽນຮູ້ມາແຕ່ດົນແລ້ວວ່າກ່ອນທີ່ຈະອູ້ມເດັກອ່ອນນ້ອຍເກີດໃຫມ່, ຜູ້ທີ່ເປັນສຸດທີ່ຮັກຂອງຄອບຄົວນັ້ນ, ຂ້າພະເຈົ້າຕ້ອງລ້າງມືໃຫ້ສະອາດເສັຍກ່ອນ. ການທີ່ຂ້າພະເຈົ້າຫຍັບເຂົ້າໃກ້ຊິດກັບພຣະເຈົ້າຫລາຍເທົ່າໃດນັ້ນ, ຂ້າພະເຈົ້າກໍເຫັນພວກທີ່ຢູ່ອ້ອມຮອບ, ຮວມທັງພວກທີ່ບໍ່ຖືກຕ້ອງປອງດອງນັ້ນນຳ ວ່າເຂົາເຈົ້າເປັນບຸດທີ່ພຣະອົງຊົງຮັກ. ກ່ອນທີ່ຂ້າພະເຈົ້າຈະແຕະຕ້ອງຊີວິດຂອງພວກເຂົາໃນທາງທີ່ຈະນຳຄວາມສງົບສຸກ, ຂ້າພະເຈົ້າຕ້ອງຟັງຄຳສັ່ງຂອງພຣະເຈົ້າໃຫ້**ຊຳຣະມືໃຫ້ສອາດ** ແລະໃນສິ່ງທີ່ຂ້າພະເຈົ້າກຳລັງເຮັດຢູ່ນັ້ນ, **ຈົ່ງເຮັດໃຫ້ໃຈຂອງທ່ານບໍຣິສຸດ** ໃຫ້ເປັນນິສັຍທີ່ຂ້າພະເຈົ້າຕ້ອງມີຕໍ່ພວກເຂົາເຈົ້າ.

ພຣະເຈົ້າບອກໃຫ້ພວກຄຣິສຕຽນໃຫ້ເອົາໃຈໃສ່ຕໍ່ການບໍ່ຖືກຕ້ອງປອງດອງກັນ ແລະຜົນຈາກການທຳລາຍຂອງມັນຢ່າງຈິງຈັງ. ສາຍສຳພັນທີ່ຂາດສະບັ້ນແລະບັນຫາທີ່ບໍ່ໄດ້ຖືກແກ້ໄຂນັ້ນຈະນຳພວກເຮົາສູ່ຄວາມບໍ່ເປັນສຸກທັງເສົ້າຫມອງແລະຮ້ອງໄຫ້ເພາະວ່າເຮົາສາມາດເຫັນວ່າການບໍ່ຖືກຕ້ອງປອງດອງກັນນັ້ນທຳລາຍຊີວິດ. ເມື່ອໃດທີ່ພວກເຮົາຫາກໃສ່ໃຈທຸ້ມເທພໍທີ່ຈະຫລັ່ງນ້ຳຕາ, ຫລັງຈາກນັ້ນພວກເຮົາກໍຈະຕຽມຕົວພ້ອມທີ່ຈະເຮັດທຸກສິ່ງທຸກຢ່າງ

ເພື່ອສ້າງຄວາມສງົບສຸກ.

ຂ້າພະເຈົ້າແລະພໍ່ໄດ້ເຂົ້າໄປໃນສານຕັດສິນນຳກັນ. ອຸບັດຕິເຫດຣົດຕຳກັນເຮັດໃຫ້ເຈົ້າໜ້າທີ່ຂຽນຕິກເກັດວ່າຂ້າພະເຈົ້າເປັນຜູ້ຜິດ. ໃນຄວາມຄິດໜຸ່ມ18 ປີຂອງຂ້າພະເຈົ້າແລ້ວແມ່ນຢາກຕໍ່ວ່າຕໍ່ຂານການຕັດສິນກ່າວຫານັ້ນ. ພໍ່ຂອງຂ້າພະເຈົ້າທີ່ຢູ່ຫັ້ນກໍພ້ອມທີ່ຈະສນັບສນູນແລະແນະນຳໃຫ້ຄວາມຄິດເຫັນທີ່ສລາດວ່າ. ລູກເອີຍ, ຈຳສອງຢ່າງນີ້ໄວ້. ອັນທີນຶ່ງ, ລາວເປັນຜູ້ຕັດສິນພິພາກສາ. ອັນທີສອງ, ລູກບໍ່ແມ່ນຜູ້ຕັດສິນ. ພໍ່ຂອງຂ້າພະເຈົ້າຫລິງເຫັນເຖິງວ່າຖ້າຄະດີນີ້ຫາກຈະຈົບລົງໂດຍດີແລ້ວ, ຂ້າພະເຈົ້າຕ້ອງຍອມຕາມການຕັດສິນຂອງຜູ້ພິພາກສາ. ນີ້ກໍເປັນຄວາມຈິງສຳລັບພວກຄຣິສຕຽນທີ່ຕົກໃນກໍຣະນີບໍ່ຖືກຕ້ອງປອງດອງກັນ. ພວກເຮົາຕ້ອງຮັບວ່າມີຜູ້ອອກກົດຣະບຽບແລະຜູ້ຕັດສິນພຽງຜູ້ດຽວ. ຂັ້ນຕອນທຳອິດທີ່ຈະກ້າວເຂົ້າສູ່ການສ້າງຄວາມສງົບສຸກຕລອດໄປຄືການເບິ່ງເຫັນອຳນາດຂອງພຣະເຈົ້າທີ່ຈະພິພາກສາການແຕກແຍກຂອງພວກເຮົາ ແລະຄວາມຕ້ອງການຂອງພວກເຮົາທີ່ຈະຕິດຕາມການຊົງນຳພາຂອງພຣະອົງໃນການສ້າງຄວາມສງົບສຸກ. ເມື່ອພວກເຮົາຫາກຖ່ອມຕົວລົງຕໍ່ພຣະພັກພຣະອົງ, ການຍອມຮັບພາກສ່ວນທີ່ຜິດຂອງພວກເຮົາ, ພຣະອົງຈະຍົກພວກເຮົາຂຶ້ນໃຫ້ເປັນພວກທີ່ສ້າງຄວາມສະງົບສຸກຂອງພຣະອົງ. ຄຣິສຕຽນທັງຫລາຍຕ້ອງຍອມຢູ່ໃຕ້ພຣະເຈົ້າ ແລະມາດຕະຖານຂອງພຣະອົງໃນພຣະຄັມພີເມື່ອພວກເຂົາຫາກກວດເບິ່ງພວກສ່ວນຂອງພວກເຂົາໃນການບໍ່ຖືກຕ້ອງປອງດອງກັນນັ້ນ.

## <u>ບົດຮຽນຊີວິດ</u>

ອະນຸຍາດໃຫ້ຄວາມຈິງທີ່ພວກເຮົາສຶກສາໃນມື້ນີ້ປ່ຽນແປງທ່ານ ຈາກເປັນຜູ້ກ່າວນິນທາຜູ້ອື່ນໃຫ້ເປັນຜູ້ສ້າງຄວາມສງົບສຸກ.

- ກວດເບິ່ງຕົນເອງ, ບໍ່ແມ່ນແບບໃສ່ຮ້າຍຕົວເອງສຳລັບບັນຫາທີ່ທ່ານປະເຊີນຢູ່ນັ້ນ, ແຕ່ວ່າໃຫ້ເປັນແບບທີ່ທ່ານຈະສາມາດເຫັນນິມິດໝາຍໃຫ້ແຈ່ມແຈ້ງຂຶ້ນເພື່ອທ່ານຈະເຫັນແລະເຮັດສິ່ງທີ່ຖືກຕ້ອງ ແລະເປັນສິ່ງທີ່ໜ້າຮັກສຳລັບຕົວເອງແລະເພື່ອພວກຜູ້ທີ່ທ່ານມີບັນຫາກ່ຽວຂ້ອງ.
- ເບິ່ງໃຫ້ເຫັນແຫລ່ງທີ່ມາຂອງການບໍ່ຖືກຕ້ອງປອງດອງກັນວ່າແມ່ນມາຈາກຕົວທ່ານຫລືບໍ່, ການຮູ້ຈັກທີ່ຈະຕ້ອງເອົາຊະນະຕໍ່ການແບ່ງແຍກພາຍໃນຕົນເອງກ່ອນຈຶ່ງຈະສາມາດສ້າງຄວາມສງົບກັບຄົນອື່ນໆໄດ້.
- ຍອມຢູ່ໃຕ້ພຣະເຈົ້າແລະຄວາມຊອບທັມຂອງພຣະອົງເພື່ອຊ່ວຍທ່ານໃຫ້ຍອມຮັບສ່ວນຮັບຜິດອບຂອງທ່ານໃນການບໍ່ຖືກຕ້ອງປອງດອງກັນນັ້ນ. ມີທາງດຽວນີ້ເທົ່ານັ້ນທີ່ທ່ານຈະບໍ່ເສັຽເວລານິນທາຜູ້ອື່ນແລະຖວາຍຊີວິດຂອງທ່ານໃສ່ວຽກງານທີ່ນຳພຣະກຽດສູ່ພຣະເຈົ້າຄືການສ້າງຄວາມສງົບສຸກ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org., by PA